# ໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳແກ້ໄຂຄວາມທຸກຍາກ (ຊສທ) ຢູ່ ສປປ ລາວ

ບົດລາຍງານຫຍໍ້ ສະບັບທີ 03/2010:

## ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໃນວຽກງານການລົງທຶນ ແລະ ເສດຖະກິດ

*ຊຸດບົດລາຍງານຫຍໍ້ທາງດ້ານນະໂຍບາຍນີ້ ແມ່ນໄດ້ສ້າງຂື້ນໂດຍໂຄງການເຊື່ອມໂຍງສິ່ງ ແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນ ຄວາມທຸກຍາກຂອງ ສປປ ລາວ ເພື່ອນຳເອົາ ບັນຫາ ດ້ານຄວາມທຸກຍາກ ແລະ ສິ່ງແວດ ລ້ອມເຂົ້າ ໃນຂະບວນການວາງ ແຜນລະດັບ ຊາດ ແລະ ການພັດທະນາ ໃນປະຈຸບັນ ຈຸດປະ ສົງຂອງ ບົດລາຍງານຫຍໍ້ນີ້ແມ່ນເພື່ອ ໃຫ້ຂໍ້ມູນ ພື້ນຖານທີ່ຊັດເຈນ ແລະ ທາງເລືອກ ທາງດ້ານ ນະໂຍບາຍ ໃນທາງປະຕິບັດ ເພື່ອສະໜັບສະ ໜູນ ການຫັນປ່ຽນທາງດ້ານເສດຖະກິດຂອງ ລາວ ໄປສູ່ເສັ້ນທາງການພັດທະນາແບບຍືນຍົງ ສຳລັບຜູ້ທຸກຍາກທີ່ສຸດ.*

*ເອກກະສານຕີພີມຜ່ານມາ:*

*01/2010 :ການຫຼຸດຜ່ອນຄວາມທຸກຍາກ ແລະ ການຈັດການດ້ານສິ່ງແວດລ້ອມ: ເປົ້າໝາຍ ການພັດທະນາຮ່ວມ ເພື່ອຄວາມຈະເລີນເຕີບ ໂຕແບບຍືນຍົງ*

*02/2010: ການນຳເອົາຕົວວັດແທກທາງດ້ານ ຄວາມທຸກຍາກ-ສິ່ງແວດລ້ອມ ເຂົ້າສູ່ລະບົບຕິດ ຕາມ ແລະ ປະເມີນຜົນຂອງເປົ້າໝາຍການຈະ ເລີນເຕີບໂຕແບບຍືນຍົງ*

*ເອກກະສານຈະຕີພີມໃນຕໍ່ໜ້າຈະແນ່ໃສ່ແກ້ໄຂ ປະເດັນຕໍ່ໄປນີ້ (ໃນທ່າມກາງເອກກາສານອື່ນໆ) ຄື:*

- *ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຂອງຂະແໜງ ການລົງ ທືນທີ່ ສຳຄັນຕົ້ນຕໍ (ນ້ຳມັນເຊື້ອໄຟຊີວະພາບ, ໂຄງການ ປູກໄມ້, ບໍ່ແຮ່, ການຂຸດຄົ້ນໄມ້ ແລະ ປ່າໄມ້, ພະລັງງານໄຟຟ້ານ້ຳຕົກ)*

*ສັງລວມຫຍໍ້* ສປປ ລາວ ໄດ້ ມີຄວາມຄືບໜ້າຢ່າງຕໍ່ເນື່ອງໃນການສົ່ງເສີມຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ ແລະ ການສົ່ງເສີມການມີສ່ວນຮ່ວມຂອງເພດຍິງຢູ່ໃນເວທີທາງດ້ານເສດຖະກິດ ແລະ ເວທີອື່ນ. ລັດຖະບານ ສປປ ລາວ ມີກົດໝາຍ ແລະ ນະໂຍບາຍ ເຊິ່ງມີຊັບພະຍາກອນເພື່ອການຈັດຕັ້ງ, ສົ່ງເສີມສະຖານະພາບຂອງເພດຍິງທຸກຄົນ ແລະ ຮັບປະກັນສິດສະເໝີພາບຂອງທຸກຄົນໃນດ້ານການເມືອງ, ເສດຖະກິດ, ຂົງເຂດນະໂຍບາຍ ແລະ ວັດທະນະທຳ.

ເຖິງແນວໃດກໍ່ຕາມ ໃນປະຈຸບັນ ຍັງຄົງມີຄວາມແຕກຕ່າງທາງດ້ານບົດບາຍຍິງ-ຊາຍຢູ່ ໂດຍສະເພາະແມ່ນ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ ແລະ ລະຫວ່າງ ຊົນເຜົ່າທີ່ແຕກຕ່າງກັນ. ຍິ່ງໄປກວ່ານັ້ນ, ສິ່ງທ້າທາຍຈຳນວນໜຶ່ງທີ່ຍັງສ້າງຂໍ້ຈຳກັດຕໍ່ກັບແມ່ຍິງລາວໂດຍທົ່ວໄປ ແມ່ນໃນດ້ານການສະແດງຄວາມສາມາດຂອງເຂົາເຈົ້າໃນການເຂົ້າຮ່ວມ ແລະ ຜົນປະໂຫຍດຈາກການລົງທຶນຢ່າງເຕັມທີ່. ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ສຳລັບແມ່ຍິງໃນຊົນນະບົດ ແລະ ບາງກຸ່ມຊົນເຜົ່າແລ້ວແມ່ນຍັງມີຄວາມທ້າທາຍຫຼາຍ.

ແມ່ຍິງມີບົດບາດສຳຄັນໃນ ເສດຖະກິດ, ກຳລັງແຮງງານ, ຂະແໜງທຸລະກິດ, ຊຸມຊົນ ແລະ ຄອບຄົວຂອງ ສປປ ລາວ. ຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ ເປັນເປົ້າໝາຍການພັດທະນາອັນໜຶ່ງເພື່ອປົກປ້ອງສິດຂອງເຂົາເຈົ້າ ໂດຍທີ່ໄດ້ປະກົດອອກມີຢູ່ໃນເປົ້າໝາຍການພັດທະນາແຫ່ງສະຫະສະວັດ, ນອກນັ້ນ ຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ ຍັງຊ່ວຍສົ່ງເສີມການເຕີບໂຕທາງດ້ານເສດຖະກິດ ແລະ ໃຫ້ຜົນປະໂຫຍດກັບເປົ້າໝາຍການພັດທະນາອື່ນນຳ.

ເນື່ອງຈາກວ່າການລົງທຶນ ເປັນອົງປະກອບສຳຄັນອັນໜຶ່ງຢູ່ໃນການເຕີບໂຕທາງດ້ານເສດຖະກິດ ແລະ ຍຸດທະສາດການພັດທະນາ, ມັນຈິ່ງເປັນສິ່ງສຳຄັນທີ່ຈະຕ້ອງຮັບປະກັນວ່າ ແມ່ຍິງໄດ້ຮັບຜົນປະໂຫຍດ ແລະ ບໍ່ໄດ້ເສຍ ໂອກາດ ໂດຍກະແສການລົງທຶນຢູ່ໃນປະເທດ.



*ພາບໂດຍ:* ***IUCN Lao PDR***

## 1. ເປັນຫຍັງຄວາມສະເໝີພາບລະຫວ່າງຍິງ-ຊາຍຈຶ່ງມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ?

ເພດຍິງ ມີບົດບາດສຳຄັນໃນ ຂະແໜງເສດຖະກິດ, ກຳລັງແຮງງານ, ທຸລະກິດ, ຊຸມຊົນ ແລະ ຄອບຄົວ ຂອງ ສປປ ລາວ. ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນເປົ້າໝາຍການພັດທະນາອັນໜຶ່ງຢູ່ໃນຕົວມັນເອງ ເພື່ອປົກປ້ອງສິດຂອງເຂົາເຈົ້າ ດັ່ງທີ່ໄດ້ລະບຸໄວ້ ຢູ່ໃນເປົ້າໝາຍການພັດທະນາແຫ່ງສະຫັດສະວັດ (MDG's) ແລະ ຄະນະກຳມະການລົບລ້າງການຈຳແນກ ຄວາມແຕກຕ່າງຕໍ່ເພດຍິງ (CEDAW). ເຖິງແນວໃດກໍຕາມ, ຍັງມີຫຼາຍຫົດທາງທີ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ຊ່ວຍສົ່ງເສີມການເຕີບໂຕທາງດ້ານເສດຖະກິດ ແລະ ໃຫ້ຜົນປະໂຫຍດກັບເປົ້າໝາຍການພັດທະນາອື່ນໆຄື:

- ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ ແກ່ເພດຍິງ ສາມາດຊ່ວຍໃນການຕໍ່ສູ້ກັບຄວາມທຸກຍາກໄດ້. ມີຫຼັກຖານຫຼາຍຢ່າງທີ່ບົ່ງບອກໄດ້ ໂດຍສະເພາະແມ່ນຢູ່ໃນລະດັບເສດຖະກິດຈຸລະພາກ ທີ່ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ເຮັດໃຫ້ທ່າແຮງທາງດ້ານການເຕີບໂຕ, ປະສິດທິຜົນຂອງການຜະລິດ ແລະ ການດຳເນີນການທາງດ້ານທຸລະກິດຫຼຸດລົງ[1]. ການຄົ້ນຄວ້າຊີ້ໃຫ້ເຫັນວ່າ ຄວາມແຕກຕ່າງໃນອັດຕາການເຕີບໂຕໃນຊ່ວງ0.4-0.9% ລະ ຫວ່າງອາຊີຕາເວັນອອກ ແລະ ເຂດຍ່ອຍຊາຮາຣາໃນ ອາຟຣິກາ ແລະ ຕາເວັນອອກກາງ ແມ່ນສາມາດອະທິບາຍໄດ້ ເນື່ອງຈາກ ຊ່ອງຫວ່າງທາງ ດ້ານບົດບາດຍິງ-ຊາຍ ທີ່ຍັງມີຫຼາຍຢູ່ໃນດ້ານ ການສຶກສາທີ່ມີຢູ່ທົ່ວໄປໃນພາກພື້ນທີ່ກ່າວມາ[2].
- ການກຳຈັດອຸປະສັກຕໍ່ກັບການມີສ່ວນຮ່ວມຂອງເພດຍິງຢູ່ໃນຕະຫຼາດແຮງງານຍັງເຮັດໃຫ້ມີຜົນກະທົບທາງບວກ ໃນການຫຼຸດຜ່ອນຄວາມທຸກຍາກໄດ້ອີກດ້ວຍ.[3]
- ແມ່ຍິງຜູ້ທີ່ໄດ້ຮັບການຈ້າງເຂົ້າເຮັດວຽກ ຫຼື ເປັນຜູ້ປະກອບການ ແມ່ນມີທ່າທີວ່າຈະຈ້າງເອົາຜູ້ຍິງຫຼາຍຂຶ້ນ ແລະ ອາດຈະມີການໃຊ້ຈ່າຍລາຍຮັບເຂົ້າໃນສະຫວັດດີການຂອງຄອບຄົວ ແລະ ລູກຂອງເຂົາເຈົ້າຫຼາຍຂຶ້ນ, ເຊິ່ງເປັນການສົ່ງເສີມການພັດທະນາ ເສດຖະກິດ-ສັງຄົມ ໃນຕໍ່ໜ້າ[4].
- ຄວາມບໍ່ສະເໝີພາບ ທາງບົດບາດຍິງ-ຊາຍ ໃນດ້ານການສຶກສາ ນັ້ນສາມາດມີຜົນສະທ້ອນຕໍ່ເປົ້າໝາຍການພັດທະນາອີກ ເຊັ່ນ: ກີດກັ້ນຄວາມຄືບໜ້າໃນການ ຫຼຸດຜ່ອນການມີລູກຫຼາຍ ແລະ ອັດຕາການຕາຍຂອງເດັກ.

## 2. ເພດຍິງຢູ່ໃນ ສປປ ລາວ ແລະ ສິ່ງທ້າທາຍຕໍ່ຄວາມສະເໝີພາບຂອງບົດບາດຍິງ-ຊາຍຢູ່ໃນການລົງທຶນ

ໃນປະຊາກອນປະມານ 6.2 ລ້ານຄົນຂອງ ສປປ ລາວ ນັ້ນ ແມ່ນມີແມ່ຍິງຫຼາຍກວ່າ 50%. ແມ່ຍິງລາວ ເປັນຜູ້ປະກອບອາຊີບໃນການກະສິກຳຫຼາຍກວ່າເຄິ່ງໜຶ່ງ ແລະ ມີອັດຕາສ່ວນສູງສຸດສຳລັບການມີສ່ວນຮ່ວມໃນດ້ານເສດຖະກິດ ລະຫວ່າງ ບັນດາປະເທດກຳລັງພັດທະນາ (70%)[5]. ແມ່ຍິງຢູ່ໃນ ສປປ ລາວ ນັ້ນໂດຍທາງທຳມະດາແລ້ວແມ່ນເປັນຜູ້ຮັບຜິດ

*Box 1. ແນວຄວາມຄິດ ແລະ ນິຍາມບົດບາດຍິງ-ຊາຍ*

**ບົດບາດຍິງ-ຊາຍ.** ອ້າງອີງເຖິງຄວາມແຕກຕ່າງລະຫ່ວາງເພດຍິງ ແລະ ເພດຊາຍຢູ່ໃນຄົວເຮືອນດຽວກັນ ແລະ ລະຫວ່າງວັດທະນາທຳ ທີ່ໄດ້ມີ ການກໍ່ສ້າງຂຶ້ນທາງສັງຄົມ ແລະ ວັດທະນາທຳ ແລະ ການປ່ຽນແປງ ຕາມເວລາ. ຄວາມແຕກຕ່າງເຫຼົ່ານີ້ແມ່ນໄດ້ສະທ້ອນໃຫ້ເຫັນຢູ່ໃນບົດບາດ, ຄວາມຮັບຜິດຊອບ, ການເຂົ້າເຖິງຊັບພະຍາກອນ ແລະ ການບໍລິການພື້ນຖານ, ຂໍ້ຄົງຄ້າງ ແລະ ໂອກາດ, ຄວາມຮັບຮູ້, ອື່ນໆ ທີ່ທັງເພດຍິງ ແລະ ເພດຊາຍມີບໍ່ຄືກັນ (Moser 1993).

**ບົດບາດຍິງ-ຊາຍ ກັບ ເພດ.** ບົດບາດຍິງ-ຊາຍ ແມ່ນໄດ້ຖືກສ້າງຂຶ້ນມາໂດຍສັງຄົມ (ສ້າງຂຶ້ນໂດຍທາງສັງຄົມ), ໃນຂະນະທີ່ ເພດແມ່ນກ່ຽວກັບຄວາມແຕກຕ່າງທາງດ້ານທຳມະຊາດ/ຊີວະວິທະຍາ ແລະ ທາງກາຍະພາບລະຫວ່າງຜູ້ຍິງ ແລະ ຜູ້ຊາຍ. ຕົວຢ່າງ ມັນແມ່ນ ເພດທີ່ກຳນົດວ່າ ຜູ້ຍິງຄວນຈະຖືພາ ແລະ ມີລູກໄດ້, ແຕ່ມັນເປັນຄວາມສຳພັນທາງດ້ານບົດບາດຍິງ-ຊາຍ ທີ່ເຮັດໃຫ້ມີຄວາມແນ່ນອນວ່າແມ່ນ ເພດຍິງທີ່ດູແລລູກ, ເຊິ່ງມີບາງຢ່າງທີ່ຜູ້ຊາຍກໍ່ສາມາດເຮັດໄດ້ຄືກັນ.

**ຄວາມສະເໝີພາບຂອງບົດບາດຍິງ-ຊາຍ**
ອ້າງອີງເຖິງຄວາມເທົ່າທຽມ ກັນທາງດ້ານໂອກາດ, ລວມທັງຄວາມເທົ່າທຽມກັນໃນດ້ານຜົນຕອບແທນທີ່ໄດ້ຮັບຈາກວຽກທີ່ໄດ້ເຮັດ, ຄວາມເທົ່າທຽມກັນໃນການເຂົ້າເຖິງ ຊັບພະຍາກອນ, ແລະ ສິ່ງອຳນວຍຄວາມສະດວກພື້ນຖານເຊັ່ນ: ການດູແລດ້ານສຸຂະພາບ, ການສຶກສາ ແລະ ການຈ້າງເຂົ້າເຮັດວຽກ. ມັນຍັງບົ່ງບອກເຖິງໂອກາດອັນເທົ່າທຽມກັນເພື່ອເຂົ້າຮ່ວມ, ເຮັດການຕັດສິນໃຈ ແລະ ປະກອບສ່ວນຕໍ່ຂະບວນການພັດທະນາ (ທະນາຄານໂລກ, 2001)

*(ແຫຼ່ງຂໍ້ມູນ: GRID. 2005. ປະຫວັດດ້ານບົດບາດຍິງ-ຊາຍຂອງລາວ)*

---

[1] ສະຫະພັນການເງິນສາກົນ & AusAID. 2010. *ການປະເມີນການປະຕິຮູບສະພາບການດ້ານບົດບາດຍິງ-ຊາຍ ແລະ ການລົງທຶນ: ບົດສັງລວມປະຈຳພາກພື້ນປາຊີຟິກ.* ວໍຊິງຕັນ, ສະຫະລັດອາເມຣິກາ.

[2] Klasen, Stephen. 1999. "ຄວາມບໍ່ສະເໝີພາບດ້ານບົດບາດຍິງ-ຊາຍເຮັດໃຫ້ການເຕີບໂຕ ແລະ ການພັດທະນາຫຼຸດລົງບໍ? ຫຼັກຖານຈາກການກັບຄືນຫຼັງຂອງຫຼາຍປະເທດ". ກຸ່ມຄົ້ນຄວ້າການພັດທະນາຂອງທະນາຄານໂລກ.

[3] Costa ແລະ Silva. 2008. "ພາລະຂອງຄວາມບໍ່ເທົ່າກັນດ້ານບົດບາດຍິງ-ຊາຍ ຕໍ່ສັງຄົມ". *ໃນການສຸມໃສ່ຄວາມທຸກຍາກ,* ສະບັບທີ.13, ສູນຄວາມທຸກຍາກສາກົນ.

[4] Nasr, Sahar. 2005. "ສະພາບບົດບາດຍິງ-ຊາຍ ແລະການລົງທຶນໃນອີຢິບ". ບົດສະເໜີຢູ່ທີ່ກອງປະຊຸມເພດຍິງຢູ່ໃນດ້ານເສດຖະກິດ, *ໄຄໂຣ, 4 ທັນວາ 2005.*

[5] ທະນາຄານໂລກ. 2010. *ນະໂຍບາຍລະດັບປະເທດຂອງ ສປປ ລາວ ແລະ ການປະເມີນທາງດ້ານສະຖາບັນ 2010. ນະຄອນຫຼວງວຽງຈັນ, ສປປ ລາວ*

ຊອບທາງດ້ານການເງິນ, ອາຫານ ແລະ ສຸຂະພາບ ຂອງຄອບຄົວ. ເຂົາເຈົ້າຍັງມີສ່ວນຮ່ວມຢ່າງຕັ້ງໜ້າ ຢູ່ໃນຂະແໜງທຸລະກິດທີ່ບໍ່ເປັນທາງການ ເຊິ່ງມີທຸລະກິດຄົວເຮືອນໃນຈຳນວນ 53% ທີ່ຜູ້ຍິງເປັນເຈົ້າຂອງ.[6]

ຢູ່ໃນນະໂຍບາຍລະດັບຊາດ, ສປປ ລາວ ໄດ້ມຸ່ງໝັ້ນຕໍ່ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ. ອັນນີ້ແມ່ນໄດ້ສະແດງອອກຢູ່ໃນລັດຖະທຳມະນູນຂອງປະເທດ, ຍຸດທະສາດ ການເຕີບໂຕແຫ່ງຊາດ ແລະ ການລຶບລ້າງຄວາມທຸກຍາກ (NGPES), ແລະ ບັນດາກົດໝາຍ ແລະ ກົດລະບຽບຕ່າງໆ ເຊັ່ນ: *ກົດໝາຍການພັດທະນາ ແລະ ປົກປ້ອງແມ່ຍິງ* (2004) ແລະ ສະຖາບັນຕ່າງໆ ເຊັ່ນ: ສະຫະພັນແມ່ຍິງລາວ (LWU), ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1955, ແລະ ຄະນະກຳມະການສົ່ງເສີມຄວາມກ້າວໜ້າຂອງເພດຍິງ (NCAW), ໄດ້ສ້າງຕັ້ງຂຶ້ນໃນປີ 2003. ສປປ ລາວ ຍັງໄດ້ໃຫ້ສັດຕະຍາບັນຕໍ່ກັບສົນທິສັນຍາສາກົນຫຼາຍສະບັບ, ລວມທັງ ສົນທິສັນຍາການກຳຈັດການຈຳແນກຄວາມແຕກຕ່າງທຸກຮູບແບບກັບແມ່ຍິງ (CEDAW, 1981), ແລະ ນະໂຍ ບາຍປັກກິ່ງ (1995)[7]. ສປປ ລາວ ໄດ້ມີ ສັດສ່ວນຂອງເພດຍິງຢູ່ໃນສະພາ (ສະພາແຫ່ງຊາດ) ປະມານ 25% ເຊິ່ງສູງທີ່ສຸດ ເປັນອັນດັບສອງໃນພາກພື້ນ. ອັນນັ້ນບົ່ງບອກໄດ້ວ່າ ແມ່ຍິງຍັງມີໜ້ອຍທີ່ເປັນຕົວແທນຢູ່ໃນອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ, ແລະ ຄະນະບ້ານເຊິ່ງເກືອບທັງໝົດເປັນເພດຊາຍ[8]. ປັດໃຈທີ່ເຮັດໃຫ້ເກີດເປັນແບບນີ້ກໍ່ອາດເນື່ອງມາຈາກ ຂໍ້ຈຳກັດໃນການເຂົ້າເຖິງການສຶກສາ ແລະ ບົດບາດຂອງຍິງ-ຊາຍ ຕາມຮີດຄອງປະເພນີຢູ່ໃນກຸ່ມຊົນເຜົ່າຕ່າງໆ.[9]

ແມ່ຍິງລາວ ຍັງມີລະດັບການອ່ານອອກຂຽນໄດ້ ແລະ ການເຂົ້າເຖິງການສຶກສາຕ່ຳ, ໂດຍສະເພາະແມ່ນການສຶກສາຂັ້ນສູງ ເຊິ່ງສະແດງໃຫ້ເຫັນທາງດ້ານນີ້ຢູ່ໃນກຸ່ມຊົນເຜົ່າຕ່າງໆ ແລະ ໃນພື້ນທີ່ຊົນນະບົດ[10]. ຢູ່ໃນລະດັບໂຮງຮຽນປະຖົມແລ້ວ, ຊ່ອງຫວ່າງລະຫວ່າງຍິງ-ຊາຍແມ່ນຂ້ອນຂ້າງ ໜ້ອຍຄືປະມານ2% ໃນປີ 2009/2010. ຊ່ອງຫວ່າງທາງດ້ານບົດບາດຍິງ-ຊາຍ ເພີ່ມຂຶ້ນໃນລະດັບການສຶກສາຂັ້ນສູງຂຶ້ນ ແລະ ເດັກຍິງແມ່ນມີສັດສ່ວນສູງທີ່ເປັນຜູ້ບໍ່ເຄີຍເຂົ້າໂຮງຮຽນເລີຍຄື: ມີ 17% ຂອງເດັກຍິງ ເມື່ອປຽບທຽບກັບເດັກຊາຍ 11%[11]. ການເຂົ້າເຖິງການສຶກສາບໍ່ພຽງແຕ່ພົວພັນກັບບົດບາດຍິງ-ຊາຍເທົ່ານັ້ນ, ແຕ່ຍັງກ່ຽວພັນເຖິງ ເລື່ອງຊົນເຜົ່າ ແລະ ສະຖານທີ່ນຳອີກ. ຕົວຢ່າງ ໃນປີ 2003 ອັດຕາການເຂົ້າຮຽນ ໃນໂຮງຮຽນປະຖົມຂອງເດັກຊາຍ/ເດັກຍິງຂອງເດັກນ້ອຍຊົນເຜົ່າລາວ-ໄຕ ແມ່ນ 90.4%/91.9% ຢູ່ໃນເຂດຕົວເມືອງ ແລະ 82.1% /80.7% ຢູ່ໃນເຂດຊົນນະບົດ. ສຳລັບເດັກນ້ອຍເຊື້ອສາຍ ຈີນ-ຕິເບດ, ອັດຕາສ່ວນການເຂົ້າໂຮງຮຽນຂອງເດັກຊາຍ/ຍິງ ແມ່ນ 86.5%/100% ຢູ່ໃນເຂດຕົວເມືອງ ແລະ 38.7%/32.7% ຢູ່ໃນເຂດຊົນນະບົດ.[12] ໃນດ້ານອັດຕາການອ່ານອອກຂຽນໄດ້ໂດຍລວມນັ້ນ, ກໍ່ຍັງມີຊ່ອງຫວ່າງຢູ່ໃນທົ່ວປະເທດ. ອີງຕາມການສຶກສາອັນໜຶ່ງ ກ່ຽວກັບການອ່ານອອກຂຽນໄດ້ຈາກການລາຍງານຂອງຜູ້ຖືກສຳພາດເອງ ແມ່ນປະມານ 78.7% ຂອງເພດຍິງອາຍຸ 15-24 ປີ ແມ່ນອ່ານອອກຂຽນໄດ້ເມື່ອປຽບທຽບກັບເພດຊາຍທີ່ມີປະມານ 89.2%[13].


*ພາບໂດຍ: **IUCN Lao PDR***

ເຖິງວ່າເຂົາເຈົ້າມີສ່ວນຮ່ວມຢ່າງຕັ້ງໜ້າຢູ່ໃນ ເສດຖະກິດ ແລະ ກຳລັງແຮງງານ, ແມ່ຍິງລາວ ປະສົບກັບພາວະດ້ອຍໂອກາດທາງທຸລະກິດ, ໂດຍສະເພາະ ຢູ່ໃນພາກທຸລະກິດທີ່ເປັນທາງການ. ການສ້າງທຸລະກິດທີ່ເປັນທາງການນັ້ນໂດຍທົ່ວໄປແລ້ວ ແມ່ນຈະໃຫ້ຜົນປະໂຫຍດກັບ ທັງຍິງ ແລະ ຊາຍ ໃນດ້ານຂອງທ່າແຮງການເຕີບໂຕ ແລະ ການເຂົ້າເຖິງສິນເຊື່ອ[14]. ໃນກໍລະນີຂອງ ສປປ ລາວ, ແມ່ຍິງມີທ່າທີວ່າຈະຢູ່ໃນຖານະດ້ອຍໂອກາດເນື່ອງມາຈາກສິ່ງຕໍ່ໄປນີ້ຄື:

- ແມ່ຍິງ ມີລະດັບການສຶກສາທີ່ ຕ່ຳກວ່າຜູ້ຊາຍ, ເຖິງວ່າມີການລົງທຶນເພີ່ມຂຶ້ນຢູ່ໃນວຽກທີ່ມີຄ່າຈ້າງດີ,ແມ່ຍິງອາດຈະບໍ່ມີຄຸນນະວຸດພຽງພໍທີ່ຈະຖືກຈ້າງໄດ້.
- ການບໍລິການດ້ານການເງິນຈຸລະພາກ ແລະ ການເງິນອື່ນໆ ໃຫ້ກັບຜູ້ທຸກຍາກ ແມ່ນກຳລັງກາຍເປັນທາງການ ແລະ ເປັນການຄ້າເພີ່ມຂຶ້ນ; ດ້ວຍເຫດນີ້, ອຸປະສັກສຳລັບຜູ້ຍິງໃນຄວາມພະຍາຍາມຈະເຂົ້າເຖິງສິນເຊື່ອ ແລະ ການບໍລິການດ້ານການເງິນພື້ນຖານອື່ນໆ ແມ່ນມັກຈະກາຍເປັນບັນຫາ.
- ແມ່ຍິງ ມີພາລະໃນການເຮັດວຽກທີ່ບໍ່ໄດ້ຄ່າຈ້າງຫຼາຍກວ່າ ຜູ້ຊາຍ ເຊັ່ນ: ການດູແລຮັກສາບ້ານ, ການລ້ຽງລູກ, ການຕັກນ້ຳ ແລະ ການໄປເອົາຟືນ ແລະ ການຊອກຫາອາຫານການກິນ. ອັນນີ້ໝາຍຄວາມວ່າເຂົາເຈົ້າມີເວລາໜ້ອຍໃນການຊອກລາຍຮັບ ແລະ ດຳເນີນທຸລະກິດ.

---

6 ທະນາຄານໂລກ, 2010.

7 GRID, 2005. *ປະຫວັດບົດບາດຍິງ-ຊາຍຂອງລາວ*; ແລະ ອົງການສະຫະປະຊາຊາດ. 2009. *ບົດລາຍງານຄວາມຄືບໜ້າເປົ້າໝາຍແຫ່ງສະຫະສະວັດ 2008, ສປປ ລາວ*.

8 GRID. 2005.

9 ອົງການສະຫະປະຊາຊາດ, 2009.

10 Messerli *et al*, ບັນນາທິການ, 2008. *ແຜນທີ່ເສດຖະກິດ-ສັງຄົມຂອງ ສປປ ລາວ - ການວິເຄາະທີ່ອີງໃສ່ປະຊາກອນປີ 2005 ແລະສຳມະໂນຄົວເຮືອນ*. NCCR North-South, ມະຫາວິທະຍາໄລເບີນ, ເບີນ ແລະ ນະຄອນຫຼວງວຽງຈັນ.

11 ທະນາຄານໂລກ, 2010.

12 ອົງການສະຫະປະຊາຊາດ, 2008.

13 ທະນາຄານໂລກ, 2010.

14 IFC & AusAID, 2010.

***Box 2. ຄວາມສະເໝີພາບໝາຍເຖິງທຸລະກິດ: ຫຼັກການໃຫ້ອຳນາດແກ່ເພດຍິງສຳລັບພາກເອກະຊົນ***

ອີງຕາມ UNIFEM ແລະ UN Global Compact ນັ້ນການສ້າງຄວາມເຂັ້ມແຂງໃຫ້ແກ່ເພດຍິງເຂົ້າຮ່ວມໃນຊີວິດທຸລະກິດຢ່າງເຕັມທີ່ແມ່ນເປັນສິ່ງຈຳເປັນເພື່ອສ້າງເສດຖະກິດໃຫ້ເຂັ້ມແຂງ, ສ້າງສັງຄົມທີ່ມີສະຖຽນລະພາບ ແລະ ຍຸຕິທຳກວ່າ, ບັນລຸເປົ້າໝາຍເພື່ອຄວາມຍືນຍົງໃນການພັດທະນາ, ປັບປຸງຄຸນນະພາບຊີວິດ, ແລະ ຂັບເຄື່ອນການດຳເນີນການ ແລະ ເປົ້າໝາຍທຸລະກິດ. ຜ່ານການປຶກສາຫາລືໃນລະດັບກວ້າງຂວາງ, ບັນດາອົງການເຫຼົ່ານີ້ ມາພ້ອມກັບຊຸດຫຼັກການທີ່ທຸລະກິດສາມາດໃຊ້ເພື່ອວິເຄາະການປະຕິບັດ ແລະ ການລາຍງານຜົນງານຂອງເຂົາ ເຈົ້າ:

- ສ້າງຕັ້ງການນຳສະຫະພາບໃນລະດັບສູງ ເພື່ອຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ.
  ເອົາໃຈໃສ່ຜູ້ຍິງ ແລະ ຜູ້ຊາຍ ທຸກຄົນຢູ່ໃນບ່ອນເຮັດວຽກຢ່າງຍຸຕິທຳ ນັ້ນກໍ່ຄືເຄົາລົບ ແລະ ສະໜັບສະໜູນສິດທິມະນຸດ ແລະ ການບໍ່ຈຳແນກຄວາມແຕກຕ່າງ.
- ຮັບປະກັນດ້ານສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການຂອງຜູ້ຍິງ ແລະ ຜູ້ຊາຍທຸກຄົນ.
- ສົ່ງເສີມການສຶກສາ, ການຝຶກອົບຮົມ ແລະ ການພັດທະນາອາຊີບໃຫ້ກັບເພດຍິງ.
- ຈັດຕັ້ງປະຕິບັດ ການພັດທະນາວິສາຫະກິດ, ສົ່ງເສີມການປະຕິບັດເລື່ອງຕ່ອງໂສ້ອຸປະທານ ແລະ ການຕະຫຼາດທີ່ເປັນການໃຫ້ອຳນາດແກ່ເພດຍິງ.
- ສົ່ງເສີມຄວາມສະເໝີພາບຜ່ານການລິເລີ່ມຂອງຊຸມຊົນ ແລະ ໃຫ້ການສະໜັບສະໜູນ.
- ວັດແທກ ແລະ ລາຍງານຄວາມຄືບໜ້າໃຫ້ກັບສັງຄົມ ເພື່ອບັນລຸຜົນດ້ານຄວາມສະເໝີພາບບົດບາດຍິງ-ຊາຍ.

*(ແຫຼ່ງຂໍ້ມູນ: UNIFEM ແລະ UN Global Compact. ຫຼັກການໃຫ້ອຳນາດແກ່ເພດຍິງ, http://www.unglobalcompact.org/Issues/human_rights/equality_means_business.html)*

- "ການເປັນຜູ້ຍິງໃຊ້ແຮງງານ" ໝາຍເຖິງ ການທີ່ຜູ້ຍິງມີແນວໂນ້ມຈະໄດ້ຮັບການຈ້າງເຮັດວຽກຫຼາຍກວ່າເພດຊາຍ ຢູ່ໃນບາງຂະແໜງການສະເພາະໃດໜຶ່ງ ເຊັ່ນ: ອຸດສາຫະກຳຕັດຫຍິບ. ເຖິງແມ່ນວ່າອຸດສາຫະກຳນີ້ສະເໜີໃຫ້ຜົນປະໂຫຍດ ເຊັ່ນ: ຄ່າຈ້າງ ແລະ ຄວາມເປັນເອກະລາດກັບເພດຍິງໄດ້ຫຼາຍກວ່າແຕ່ກໍ່ເຫັນໄດ້ວ່າມີຜົນກະທົບທາງລົບຕໍ່ເຂົາເຈົ້າເຊັ່ນກັນ. ຕົວຢ່າງ: ຊ່ອງຫວ່າງທາງດ້ານຄ່າຈ້າງບໍ່ຄ່ອຍຈະໃກ້ຄຽງກັນໃນອຸດສາຫະກຳດັ່ງກ່າວໂດຍທີ່ໄດ້ຈ້າງເພດຍິງກໍ່ເພາະວ່າສາມາດຈ້າງເຂົາເຈົ້າໄດ້ໃນລາຄາຖືກກວ່າ.

- ຄວາມຮັບຮູ້ທາງດ້ານກົດໝາຍຍັງຕໍ່າ, ໂດຍສະເພາະກ່ຽວກັບກົດໝາຍທີ່ມີຜົນກະທົບຕໍ່ກັບເພດຍິງ ເຊັ່ນ: ກົດໝາຍການສືບທອດມໍລະດົກ. ການບັງຄັບໃຊ້ ກົດໝາຍຕ້ານ ການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງກັບເພດຍັງ ແມ່ນຍັງເຮັດບໍ່ໄດ້ດີ ແລະ ຍັງມີຊ່ອງຫວ່າງຢູ່[15]. ຕົວຢ່າງ: ກົດໝາຍ *ການພັດທະນາ ແລະ ປົກປ້ອງແມ່ຍິງຂອງ ສປປ ລາວ 2004* ເວົ້າເຖິງຄວາມຮຸນແຮງໃນຄອບຄົວ ແຕ່ກໍ່ ຍັງຂາດຄຳແນະນຳທີ່ວ່າຈະຖືກລົງໂທດ. ໃນກໍລະນີທີ່ເກີດມີຄວາມຮຸນແຮງກັບສະມາຊິກຄອບຄົວ, ກົດໝາຍຍັງຍືນຍັນໃຫ້ເຮັດການໄກ່ເກ່ຍ ລະຫວ່າງເຂົາເຈົ້າເອງ ຫຼື ໂດຍໜ່ວຍໄກ່ເກ່ຍຂັ້ນບ້ານແທນທີ່ຈະດຳເນີນການຟ້ອງຮ້ອງດຳເນີນຄະດີ. ການໃຊ້ຄວາມຮຸນແຮງທາງເພດ ແລະ ການຂົ່ມຂືນກັບ ສາມີ ຫຼື ພັນລະຍາ ແມ່ນຍັງບໍ່ທັນໄດ້ຮັບການພິຈາລະນາວ່າເປັນການກະທຳຜິດທາງອາຍາ.

- ການເຊື່ອມສານເສດຖະກິດຂະໜາດໃຫຍ່ຂອງ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແມ່ນໄດ້ເຮັດໃຫ້ມີ ການອົບພະຍົກເພີ່ມຂຶ້ນຢູ່ພາຍໃນ ແລະ ລະຫວ່າງປະເທດ. ມີຄວາມສ່ຽງທີ່ກ່ຽວຂ້ອງກັບການອົບພະຍົກ ທີ່ເຮັດໃຫ້ເພດຍິງ ແລະ ເດັກນ້ອຍ ເປັນພວກທີ່ຈະໄດ້ຮັບຜົນກະທົບເປັນພິເສດ ເຊັ່ນ: ການຖືກກົດຂີ່ຂູດຮີດ, ຕົກເປັນເຫຍື່ອຂອງ ເຄືອຂ່າຍການຄ້າມະນຸດ, ການກົດຂີ່ທາງເພດ ແລະ ສ່ຽງຕໍ່ການຕິດເຊື້ອ HIV/AIDS ແລະ ເຫຍື່ອຂອງຄວາມຮຸນແຮງ[16].

## 3. ທາງເລືອກດ້ານນະໂຍບາຍມີວິທີການທີ່ດີກວ່າເພື່ອແບ່ງປັນຜົນປະໂຫຍດຂອງການລົງທຶນຄືແນວໃດ?

ການລົງທຶນບໍ່ແມ່ນຈຸດຈົບໃນຕົວມັນເອງ; ມັນໃຫ້ຜົນປະໂຫຍດກັບທັງຍິງ ແລະ ຊາຍ ແຕ່ມັນຈະຕ້ອງໄດ້ຮັບການຄຸ້ມຄອງ ເພື່ອຮັບປະກັນໄດ້ຜົນປະໂຫຍດທີ່ເກີດຂຶ້ນນັ້ນໄດ້ຮັບການກະຈາຍຢ່າງສະໝ່ຳສະເໝີ. ມີຫຼາຍທາງເລືອກທາງດ້ານນະໂຍບາຍ ແລະ ການປະຕິບັດທີ່ເປີດໃຫ້ກັບອົງການຂອງລັດຖະບານ, ຜູ້ວາງແຜນການພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອໃຫ້ຮັບປະກັນວ່າໄດ້ນຳເອົາເລື່ອງບົດບາດຍິງ-ຊາຍເຂົ້າສູ່ແຜນການໃນການພິຈາລະນາເລື່ອງການລົງທຶນ.

*<u>ນຳໃຊ້ປະໂຫຍດຂອງທັງກຸ່ມປະຕິບັດການເລື່ອງບົດບາດຍິງ-ຊາຍຂອງກະຊວງແຜນການ ແລະ ການລົງທຶນ ແລະ ສະຫະພັນແມ່ຍິງລາວ.</u>* ຕາມກົດໝາຍແລ້ວ, ບັນດາກະຊວງຂອງລັດຖະບານລາວ ຮຽກຮ້ອງໃຫ້ຕ້ອງສ້າງຕັ້ງກຸ່ມ ເຮັດວຽກເລື່ອງບົດບາດຍິງ-ຊາຍ, ຍຸດທະສາດ ແລະ ແຜນປະຕິບັດການຂອງຕົນເອງ. ມັນເປັນເລື່ອງ ສຳຄັນທີ່ກຸ່ມເຮັດວຽກບົດບາດ ຍິງ-ຊາຍ ຂອງກະຊວງແຜນການ ແລະ ການລົງທຶນ ບໍ່ພຽງແຕ່ຈະໄດ້ຮັບການສ້າງຕັ້ງຂຶ້ນເທົ່ານັ້ນ ແຕ່ຍັງຈຳເປັນຕ້ອງໄດ້ປຶກສາຫາລື ແລະ ຊອກຫາວິທີການແກ້ໄຂອຸປະສັກທີ່ຈຳກັດຄວາມສາມາດຂອງເພດຍິງ, ໃນການໄດ້ຮັບຜົນປະໂຫຍດຢ່າງເຕັມທີ່ ຈາກກະແສຂອງການ

[15] GRID, 2005.

[16] GRID, 2005.

ລົງທຶນ. ການປະຕິບັດການເຫຼົ່ານີ້ຍັງຕ້ອງໄດ້ຮັບການສະໜັບສະໜູນຈາກທາງສະຫະພັນແມ່ຍິງ ເຊິ່ງ ເຮັດວຽກກັບບັນພື້ນຖານສະມາຊິກຂອງຕົນເອງ ແລະ ເຄືອຂ່າຍໃນທົ່ວປະເທດ ເພື່ອຕອບສະໜອງຕໍ່ກັບຄວາມຕ້ອງການໃນການພັດທະນາຂອງເພດຍິງ.[17]

*ການເພີ່ມຕົວແທນຂອງເພດຍິງ ເຂົ້າຢູ່ໃນໜ່ວຍງານການຕັດສິນນະໂຍບາຍໃນທຸກລະດັບ* ຢູ່ໃນ ສປປ ລາວ ແມ່ນຈະຊ່ວຍປັບປຸງການມີສ່ວນຮ່ວມຢູ່ໃນເສດຖະກິດ ແລະ ການລົງທຶນ. ການມີເພດຍິງເປັນຕົວແທນຢູ່ໃນອົງການຈັດຕັ້ງຕັດສິນວາງນະໂຍບາຍຢູ່ໃນ ສປປ ລາວ ແມ່ນຍັງບໍ່ທັນມີຄວາມສະໝໍ່າສະເໝີ ເນື່ອງມາຈາກຫຼາຍປັດໄຈ ເຊັ່ນ: ການຂາດຄວາມຮັບຮູ້ ແລະ ອັດຕາການກືກໜັງສືຂອງເພດຍິງ ແມ່ນຍັງມີສູງ. ເພື່ອແກ້ໄຂບັນຫານີ້ ຄະນະບ້ານ ແລະ ກຸ່ມບ້ານ (ຄະນະກຸ່ມບ້ານພັດທະນາ) ຈຳເປັນຕ້ອງໃຫ້ມີໂຄຕາສຳລັບຕົວແທນທີ່ເປັນເພດຍິງ; ບັນດາບໍລິສັດ ແລະ ອົງການພັດທະນາຍັງສາມາດຊອກວິທີການເພື່ອແກ້ໄຂການມີເພດຍິງເປັນຕົວແທນໜ້ອຍຢູ່ໃນໂຄງການຂອງຕົນເອງ, ໃນຂະບວນການປຶກສາຫາລື ແລະ ການຕັດສິນບັນຫາ.[18]

*ການເຂົ້າເຖິງການເງິນ, ລວມທັງການບໍລິການສິນເຊື່ອ ແລະ ດ້ານການເງິນ ເຊັ່ນດຽວກັບ ຂໍ້ມູນກ່ຽວກັບກົດລະບຽບ ແລະ ການອອກໃບອະນຸຍາດປະກອບການທາງທຸລະກິດ ແມ່ນເປັນຄວາມສຳຄັນທີ່ສຸດສຳລັບການສະໜັບສະໜູນຜູ້ປະກອບການທີ່ເປັນເພດຍິງ.* ທາງເລືອກໜຶ່ງ ແມ່ນການລົງທຶນເພີ່ມຂຶ້ນຢູ່ໃນສິນເຊື່ອຂອງເພດຍິງ ເຊັ່ນ: ກຸ່ມສະໜອງເງິນໃຫ້ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ (SME) ແລະ ການເງິນຈຸລະພາກທີ່ໃຫ້ສິນເຊື່ອກັບເພດຍິງ ແລະ ສ້າງຄວາມເຂັ້ມແຂງດ້ານຄວາມສາມາດຂອງສະມາຄົມທຸລະກິດ ທີ່ສາ ມາດໃຫ້ການສະໜັບສະໜູນ ແລະ ໃຫ້ຂໍ້ມູນກັບນັກທຸລະກິດຍິງ.

*ກຳນົດຄວາມຕ້ອງການໃນການປະຕິບັດທີ່ມີຄວາມລະອຽດອ່ອນຕໍ່ກັບບົດບາດຍິງ-ຊາຍ ສຳລັບນັກລົງທຶນ* ເພື່ອຊ່ວຍເພີ່ມຜົນປະໂຫຍດຂອງເພດຍິງໃຫ້ສູງສຸດໃນຕໍ່ໜ້າຈາກການລົງທຶນ ເຊັ່ນ: ສຳລັບການຊົດເຊີຍ, ການຕັ້ງຖິ່ນຖານໃໝ່, ການມີວຽກເຮັດງານທຳໃນທ້ອງຖິ່ນ ແລະ ທາງເລືອກໃນການດຳລົງຊີວິດ. ຕ້ອງໄດ້ຫຼີກລ້ຽງ ເລື່ອງການໃຫ້ສິ່ງຈູງໃຈໃດໜຶ່ງກັບນັກລົງທຶນ ເຊິ່ງສົ່ງເສີມການແຂ່ງຂັນໄປສູ່ການເອົາໃຈໃສ່ຕໍ່າກ່ຽວກັບ ໃນດ້ານແຮງງານ, ສັງຄົມ ແລະ ມາດຕະຖານສິ່ງແວດລ້ອມ.

*ການເກັບກຳ ແລະ ການວິເຄາະຂໍ້ມູນ ທີ່ໄຈ້ແຍກທາງດ້ານບົດບາດຍິງ-ຊາຍ* ຈະຊ່ວຍຊີ້ໃຫ້ເຫັນຜົນກະທົບຄວາມແຕກຕ່າງຂອງການລົງທຶນກັບຍິງ ແລະ ຊາຍ. ຂໍ້ມູນການແຕກແຍກທາງດ້ານບົດບາດຍິງ-ຊາຍຍັງສາມາດໃຊ້ ເພື່ອໃຫ້ຂໍ້ມູນນະໂຍບາຍທີ່ໄດ້ຈຳແນກຄວາມແຕກຕ່າງຕອບສະໜອງຕໍ່ກັບບັນຫາທີ່ມີຜົນກະທົບຕໍ່ກັບທັງຍິງ ແລະ ຊາຍ.

*ລົງທຶນໃສ່ໃນພາກການສຶກສາຂອງເພດຍິງ* ຜ່ານການປັບປຸງການເຂົ້າເຖິງພາກການສຶກສາທຸກລະດັບ ໂດຍສະເພາະໃນພື້ນທີ່ຊົນນະບົດກັບກຸ່ມຊົນເຜົ່າ, ລວມທັງການໂຄສະນາສ້າງຈິດສຳນຶກໂດຍເນັ້ນເປົ້າໝາຍໃສ່ພໍ່ແມ່. ອາດຈະມີຄວາມຈຳເປັນຕ້ອງໄດ້ໃຫ້ ການຊ່ວຍເຫຼືອດ້ານການສຶກສາໃນລະດັບສູງຂຶ້ນນຳອີກດ້ວຍ.



*ພາບໂດຍ:* ***IUCN Lao PDR***

[17] "ການສ້າງຄວາມເຂັ້ມແຂງຂອງສະຫະພັນແມ່ຍິງລາວ ແລະ ການກະຊຸງມສຳລັບກິຈັກຂອງແມ່ຍິງແຫ່ງຊາດ" (http://www.unifem-eseasia.org/projects/Lao/lao.htm)

[18] ບົດລາຍງານຄວາມຄືບໜ້າເປົ້າໝາຍການພັດທະນາແຫ່ງສະຫະສະວັດ 2008.

*PEI ແມ່ນຫຍັງ?*

ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ (UNEP) ສະໜັບສະໜູນໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI), ເປັນໂຄງການທີ່ເລັ່ງໃສ່ ເພື່ອເຊື່ອມໂຍງບັນຫາທາງດ້ານຄວາມທຸກຍາກ ແລະ ສິ່ງແວດລ້ອມ ເຂົ້າສູ່ຂະບວນການວາງແຜນ ແລະ ການພັດທະນາລະດັບຊາດ. ຈຸດປະສົງຂອງ PEI ຢູ່ໃນ ສປປ ລາວ ແມ່ນເພື່ອຮັບປະກັນການເຕີບໂຕທາງດ້ານເສດຖະກິດທີ່ໄວຂອງປະເທດ ພ້ອມທັງ ສ້າງໃຫ້ເກີດການພັດທະນາທີ່ຍືນຍົງ. PEI ສົ່ງເສີມການສ້າງຄວາມເຂັ້ມແຂງທາງດ້ານສະຖາບັນ ໃນການວາງແຜນການພັດທະນາລະດັບຊາດ ແລະ ການຄຸ້ມຄອງການລົງທຶນພາກເອກະຊົນ, ການສ້າງບົດແນະນຳ ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ແລະ ການສ້າງການຄົ້ນຄວ້າທີ່ອີງໃສ່ຫຼັກຖານກ່ຽວກັບມູນຄ່າທາງດ້ານສັງຄົມ ແລະ ສິ່ງແວດລ້ອມຕໍ່ກັບການຕັດສິນໃຈນຳໃຊ້ທີ່ດິນ. ໂຄງການໄດ້ຮັບການປະສານງານ ໂດຍກະຊວງແຜນການ ແລະ ການລົງທຶນ ໂດຍທີ່ທາງອົງປະກອບຂອງໂຄງການແມ່ນໄດ້ຮັບການຄຸ້ມຄອງໂດຍ ກົມແຜນການ, ກົມສົ່ງເສີມການລົງທຶນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

www.unpei.org/programmes/country_profiles/lao-pdr.asp

**ຂໍ້ມູນຕິດຕໍ່ສຳລັບ PEI ຢູ່ໃນ ສປປ ລາວ ແມ່ນ:**

pei.lao@undp.org


*ພາບໂດຍ:* ***IUCN Lao PDR***

ບົດລາຍງານຫຍໍ້ສະບັບນີ້ ແມ່ນທາງອົງການ IUCN ປະຈຳລາວ ແລະ GRID ເປັນຜູ້ກະກຽມພາຍໃຕ້ ການອຸປະຖຳຂອງໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນຄວາມທຸກຍາກ.

IUCN, **ອົງການສາກົນເພື່ອການອະນຸລັກທຳມະຊາດ**, ຊ່ວຍໂລກຊອກຫາທາງອອກທີ່ເປັນຄວາມຈິງຕໍ່ກັບສະພາບແວດລ້ອມ ທີ່ກົດດັນເກືອບທັງໝົດຂອງພວກເຮົາ ແລະ ສິ່ງທ້າທາຍໃນການພັດທະນາ ໂດຍການສະໜັບສະໜູນການຄົ້ນຄວ້າທາງດ້ານວິທະຍາສາດ; ການຄຸ້ມຄອງໂຄງການໃນພາກສະໜາມເກືອບທັງໝົດໃນທົ່ວໂລກ; ແລະ ການນຳເອົາລັດຖະບານ, NGOs, UN, ສົນທິສັນຍາສາກົນ ແລະບໍລິສັດຕ່າງໆເຂົ້າມາຮ່ວມສ້າງນະໂຍບາຍ, ກົດໝາຍ ແລະ ການປະຕິບັດການທີ່ດີທີ່ສຸດ. ຢູ່ໃນເຄືອຄ່າຍທາງດ້ານສິ່ງແວດລ້ອມຂອງໂລກໃຫຍ່ທີ່ສຸດ ແລະ ເກົ່າແກ່ທີ່ສຸດນັ້ນ, IUCN ເປັນສະຫະພັນສະມາຊິກປະຊາທິປະໄຕຮ່ວມກັບອົງການຈັດຕັ້ງທີ່ເປັນຂອງລັດ ແລະ ຂອງ NGO ຫຼາຍກວ່າ 1,000 ອົງການ ແລະ ມີນັກວິທະຍາສາດ ແລະ ຜູ້ຊ່ຽວຊານອາສາສະໝັກໃນຈຳນວນເກືອບ 11,000 ຄົນຢູ່ໃນ 160 ປະເທດ. ວຽກງານຂອງ IUCN ໄດ້ຮັບການສະໜັບສະໜູນໂດຍພະນັກງານມືອາຊີບຫຼາຍກວ່າ 1,000 ຄົນຢູ່ໃນ 60 ກວ່າຫ້ອງການ ແລະ ມີຄູ່ຮ່ວມງານຫຼາຍຮ້ອຍພາກສ່ວນຢູ່ໃນພາກລັດ, NGO ແລະ ພາກເອກະຊົນໃນທົ່ວໂລກ. ສຳນັກງານໃຫຍ່ຂອງ IUCN ແມ່ນຕັ້ງຢູ່ໃນເມືອງ Gland, ໃກ້ກັບນະຄອນ ຫຼວງ Geneva, ໃນປະເທດ Switzerland.
www.iucn.org

**ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາ ຫຼື** GRID ຢູ່ພາຍໃຕ້ສະຫະພັນແມ່ຍິງລາວແມ່ນເປັນໃຈກາງການປະສານງານສຳລັບຂໍ້ມູນ ແລະ ເປັນພາກສ່ວນສຳຄັນຢູ່ໃນ ສປປ ລາວ. ທາງສູນ ມີຈຸດມຸ່ງໝາຍທີ່ຈະເພີ່ມ ແລະ ປັບປຸງຂໍ້ມູນບົດບາດຍິງ-ຊາຍ ທີ່ມີຢູ່ໃຫ້ກັບສັງຄົມ ແລະ ຜູ້ວາງນະໂຍບາຍ. ທີ່ຢູ່: ຖະໜົນໂພນທັນ, ບ້ານສະພານທອງກາງ, ເມືອງສີສັດຕະນາກ, ຕູ້ ປ. ນ. 59, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ/ແຟັກ: +856-21-416343. ອີເມລ໌: gridvte@yahoo.com

ການປະກອບຄຳຄິດຄຳເຫັນ ທີ່ບັນລະຍາຍຢູ່ໃນສິ່ພິມນີ້ ແມ່ນເປັນຂອງຜູ້ຂຽນ ຊຶ່ງບໍ່ກ່ຽວຂ້ອງກັບກະຊວງແຜນການ ແລະ ການລົງທຶນ ຢູ່ ສປປ ລາວ